# ບົດທີ 16

# ການເຊື່ອໃນວັດຖຸສິ່ງຂອງ ພາກຕົ້ນ:




ໃນການທົດລອງຂອງພະເຢຊູ ມານຈະໃຫ້ແກ້ບັນຫາຂອງພະອົງດ້ວຍອາໄສວັດຖຸສິ່ງຂອງ ບໍ່ແມ່ນແຕ່ເທື່ອດຽວນັ້ນ ພະອົງພົບການທົດລອງນັ້ນມາຫຼາຍເທື່ອ. ຊາດຢິວເປັນຄົນທີ່ຖືກການກົດຂີ່ຂົ່ມເຫັງມາແຕ່ ດົນ ພະອົງເປັນຊາດຢິວຈຶ່ງຢາກໃຫ້ບັນເທົາທຸກ ຊາດແຫ່ງຕົນດ້ວຍວັດຖຸສິ່ງຂອງ, ພະອົງກໍຮັບຮູ້ ວ່າບໍ່ສາມາດຈະແກ້ບັນຫາດ້ານສັງຄົມຫຼືແຫ່ງການເມືອງດ້ວຍວັດຖຸສິ່ງຂອງ. ການຖືວັດຖຸສິ່ງຂອງ ມີຄວາມບົກພ່ອງ 4 ປະການ. ໃນບົດຮຽນນີ້ ເຮົາຈະຮຽນເລື່ອງ 4 ປະການນັ້ນ.

ແຕ່ກ່ອນຈະເລີ້ມຕົ້ນ ຢ່າລືມອ້ອນວອນຂໍໃຫ້ ພະເຈົ້າຊ່ອຍ!

**1** ໃນສະໄຫມພະເຍຊູ ຈັກກະພັດໃດປົກຄອງປະເທດປາແລັດສະຕິນ? _______________

**2** ເຖິງວ່າຊາດໂລມເຄີຍອ້າງວ່າເຂົາປົກຄອງໂດຍອາໄສກົດຫມາຍກໍຕາມ ແຕ່ທີ່ຈິງກົດຫມາຍໂລມເປັນປະໂຫຍດເພື່ອ ສະເພາະແຕ່ສັນຊາດໂລມຢ່າງດຽວ ຄົນໃດທີ່ບໍ່ເປັນສັນຊາດໂລມກໍບໍ່ມີສິດເສລີພາບ. ຜູ້ທີ່ເຈົ້າຈັກກະພັດໂລມແຕ່ງຕັ້ງ ເປັນເຈົ້າແຂວງປົກຄອງແຂວງຕ່າງໆ ໃນປາແລັດສະຕິນບໍ່ເອົາໃຈປະຊາຊົນ ເຂົາເອົາແຕ່ໃຈເຈົ້າຈັກກະພັດໂລມ. ໃຫ້ອ່ານ ລູກາ 3:18-20 ຕອນນັ້ນເວົ້າເຖິງການບໍ່ຍຸດຕິທໍາປະການຫນຶ່ງ, ກະສັດເຮໂລດ ເຮັດຫຍັງຕໍ່ໂຢຮັນ?

_______________________________________________

**3** ສາມຕອນພະຄໍາພີຕໍ່ໄປນີ້ກ່າວເລື່ອງການບໍ່ຍຸດຕິທໍາ. (ໃຫ້ທ່ານເຈາະຈົງໄວ້)

ກ. ມທ 2:16 _______________________________________

ຂ. ມທ 14:1-12 _______________________________________

ຄ. ມທ 27:27-31 _______________________________________

**4** ໃນສະໄຫມພະເຍຊູ ມີການບໍ່ຍຸດຕິທໍາໃນການປົກຄອງຂອງຈັກກະພັດໂລມ ຍິ່ງກວ່ານັ້ນຍັງມີການບໍ່ຍຸດຕິທໍາໃນພວກ ສາດສະຫນາດ້ວຍ. ໃຫ້ອ່ານ ມທ 21:13 ພະອົງຊົງຊໍາຣະພະວິຫານສອງເທື່ອຈຶ່ງວ່າ "ມີຄໍາຊຽນໄວ້ໃນພະຄໍາພີວ່າ ວິຫານຂອງເຮົາ ເຂົາຈະເອີ້ນວ່າເປັນສະຖານທີ່ໄຫວ້ວອນ` ແຕ່ຝ່າຍພວກເຈົ້າໄດ້ເຮັດໃຫ້ເປັນ ____________________"

**5** ກ. ການແລກປ່ຽນເງິນໃນພະວິຫານສະແດງຄວາມບໍ່ຍຸດຕິທໍາໃນສາດສະຫນາ ຫຼືໃນກົດຫມາຍ? _______________________________________

ຂ. ການຂ້າໂຢຮັນ ເດ? _______________________________________

ຕອບ:

*1* *ຈັກກະພັດໂລມ*

*2* *ຂັງໄວ້ໃນຄຸກ*

*3* *ກ. ເຮໂລດຂ້າເດັກນ້ອຍ ຂ. ເພິ່ນຂ້າໂຢຮັນບັບຕິສະໂຕ*

*ຄ. ທະຫານຫົວລໍ້ແລະທໍລະມານພະເຍຊູ*

*4* *ຖໍ້າຂອງໂຈນ*

*5* *ກ. ສາດສະຫນາ ຂ. ກົດຫມາຍ*

**6** ຊາດລາວເຮົາເຄີຍພົບປະສົບການບໍ່ຍຸດຕິທຳຫຼາຍປະການໃນອະດີດ. ເຊັ່ນດຽວກັນໃນສະໄໝຂອງພະເຢຊູ ມີການບໍ່ ຍຸດຕິທຳຫຼາຍປະການທັງດ້ານການເມືອງກໍດີ ແລະດ້ານສາດສະໜາດ້ວຍ. ການບໍ່ຍຸດຕິທຳດ້ານການສັງຄົມກໍດີ ການ ເມືອງກໍດີ ດ້ານເສດຖະກິດກໍດີ ມີຢູ່ໃນຫຼາຍປະເທດໃນຫຼາຍຮ້ອຍປີ. ຕະຫຼອດຊີວິດຂອງພະອົງເຫັນສິ່ງບໍ່ຍຸດຕິທຳບາງ ເທື່ອພະເຢຊູຢາກຈະແກ້ໄຂບັນຫາເຫຼົ່ານັ້ນ ແຕ່ຖ້າພະອົງຈະຍຶດສິດປາສະຈາກການຊີ້ນຳຈາກພະບິດາຈະບໍ່ມີປະ ໂຫຍດ. ພະອົງຖືກການທົດລອງໃນການແກ້ບັນຫາຕົນເອງປາສະຈາກການຊີ້ນຳຈາກພະບິດາບ່ອນໃດ? (ເລືອກ)

______ ໃນປ່າ ______ ຢູ່ເທິງຫຼັງຄາພະວິຫານ ______ ບ່ອນພູສູງ

**7** ພະເຢຊູຖືກທົດລອງໃນປ່າ ໃຫ້ແກ້ບັນຫາຂອງຕົນປາສະຈາກພະເຈົ້າ ຄືໃນດ້ານໃດ? (ເລືອກ)

______ ວັດຖຸສິ່ງຂອງ ______ ອຳນາດ ______ ຈອງຫອງ

**8** ມາເຖິງທຸກມື້ນີ້ພະຍາມານບໍ່ປ່ຽນ, ມານທົດລອງມະນຸດເຮົາໃນທຳນອງດຽວກັນວ່າ ໃຫ້ເຮົາແກ້ໄຂບັນຫາດ້ານຄວາມ ຍາກຈົນແດ່, ຄວາມອຶດຢາກແດ່, ການກົດຂີ່ຂົ່ມເຫັງແດ່, ການບໍ່ຍຸດຕິທຳແດ່ ປາສະຈາກພະເຈົ້າ ຄືວ່າຈະແກ້ໄຂບັນ ຫາເຫຼົ່ານັ້ນ ທາງວັດ ________________ (ໃຫ້ຕື່ມຄວາມທີ່ຂາດ)

**9** ພະອົງມີຈຸດປະສົງວ່າຈະຕໍ່ສູ້ການບໍ່ຍຸດຕິທຳແລະການບໍ່ຊອບທຸກປະການ. ພະອົງຮັບບັບຕິສະມາເພື່ອໃຫ້ຖືກກັບຫຍັງ? (ເບິ່ງ ມທ 3:15) ________________________________

**10** ພະອົງເຮັດຢ່າງນັ້ນໃຫ້ຖືກກັບຄວາມຊອບທຳທຸກປະການ ຄວາມຊອບທຳເຂົ້າກັບຄວາມໃດຕໍ່ໄປນີ້? (ເລືອກ)

______ ການບໍ່ຍຸດຕິທຳ ______ ວັດຖຸສິ່ງຂອງ ______ ຄວາມຍຸດຕິທຳ

**11** ຖ້າພະອົງຈະເອົາກ້ອນຫີນເປັນອາຫານໝາຍຄວາມວ່າ ພະອົງຖືວ່າວັດຖຸສິ່ງຂອງສຳຄັນກວ່າພະປະສົງຂອງພະເຈົ້າ. ຜູ້ທີ່ຖືວັດຖຸສິ່ງຂອງຊອກຫາຫຍັງ? (ເລືອກ)

ກ. ການຍຸດຕິທຳປາສະຈາກພະເຈົ້າ

ຂ. ການຍຸດຕິທຳປາສະຈາກມະນຸດ

ຄ. ບໍ່ຊອກຫາຫຍັງເລີຍ

ຕອບ:

**6** *ໃນປ່າ*

**7** *ວັດຖຸສິ່ງຂອງ*

**8** *ວັດຖຸສິ່ງຂອງ*

**9** *ຄວາມຊອບທຳທຸກປະການ*

**10** *ຄວາມຍຸດຕິທຳ*

**11** *ກ.ຖືກ*

**12** ພວກທຶນນິຍົມເປັນທີ່ເນັ້ນຫນັກຢ່າງໃດກ່ອນ? (ເລືອກ)

ກ. ວັດຖຸສິ່ງຂອງ ຂ. ວັດຖຸປະສົງ ຄ. ວັດວາອາຣາມ

**13** ຝ່າຍສັງຄົມນິຍົມມີຈຸດປະສົງຈະຊ່ວຍຄົນທີ່ຖືກກົດຂີ່ຂົ່ມເຫັງດ້ວຍຄວາມບໍ່ຍຸດຕິທໍາຫຼາຍປະການ ແຕ່ທີ່ຈິງເຖິງມະນຸດມີພໍຢູ່ ພໍກິນກໍຕາມ ແຕ່ຍັງບໍ່ພໍໃຈຈັກເທື່ອ. ຖ້າທຸກຄົນມີພໍກິນ ພໍຢູ່ຈະເປັນຢ່າງໃດ? (ໃຫ້ເລືອກ)

ກ. ບັນຫາຈະແກ້ໄຂບໍລິບູນແລ້ວ

ຂ.ບັນຫາຈະແກ້ແດ່ແຕ່ອາດຈະບໍ່ສົມບູນ

ຄ.ບັນຫາຍິ່ງຫນັກຫນ່ວງກວ່າເກົ່າ

*ການອາໃສວັດຖຸສິ່ງຂອງບໍ່ວ່າຝ່າຍໃດກໍດີຍັງມີຄວາມບົກພ່ອງຢູ່ເຮົາສະເຫນີຄວາມບົກພ່ອງ 4 ປະການຄື:*

<u>ຄວາມບົກພ່ອງ ທີ 1</u>

**14** ພະເຍຊູຕອບພະຍາມານຢ່າງໃດໃນ ມທ 4:4 ນັ້ນແຫຼະອາຫານສິ່ງດຽວບໍ່ພໍ. ວັດຖຸສິ່ງຂອງຢ່າງດຽວຈະໃຫ້ມີຄວາມ ພໍໃຈບໍ່? ____________________________________________

**15** ສຸພາສິດ 15:16-17 ບອກວ່າ "ເຂົ້າຂອງເລັກນ້ອຍກັບຄວາມຢໍາເກງພະຜູ້ເປັນເຈົ້າ ກໍປະເສີດກວ່າຂອງຫຼາຍກັບ ການວຸ້ນວາຍ ກິນແຕ່ຜັກກັບຄວາມຮັກກັນກໍປະເສີດກວ່າກິນຊີ້ນງົວພີກັບຄວາມກຽດຊັງກັນ". ສຸພາສິດ 17:1 ເວົ້າວ່າ "ຖ້າມີອາຫານແຫ້ງຕ່ອນນ້ອຍພ້ອມດ້ວຍໄມຕີກັນ ກໍດີກວ່າມີຊີ້ນສັດບູຊາເຕັມເຮືອນກັບການ ຜິດຖຽງກັນ". ດັ່ງນັ້ນອັນໃດມີຄວາມພໍໃຈ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

______ ຊີ້ນ ______ ເຂົ້າຂອງຫຼາຍ ______ ຄວາມຮັກ

**16** ໃນ ລູກາ 12:15 ມີຜູ້ຫນຶ່ງທີ່ເປັນຫ່ວງກັບມໍລະດົກ. ພະເຍຊູຕອບເພິ່ນວ່າ "ຈົ່ງລະວັງ ແລະຮັກສາຕົວໄວ້ຈາກການ ໂລບທຸກຢ່າງເພາະຊີວິດຂອງມະນຸດບໍ່ຂຶ້ນກັບ _________________ " (ຈົ່ງຕື່ມຄວາມທີ່ຂາດ)

**17** ດັ່ງນັ້ນຄວາມບົກພ່ອງອັນຫນຶ່ງຂອງວັດຖຸສິ່ງຂອງ ຄືວ່າມີປານໃດກໍຕາມ ມະນຸດເຮົາບໍ່ ______________ ກັບວັດຖຸສິ່ງຂອງນັ້ນ. (ຈົ່ງຕື່ມຄວາມທີ່ຂາດ)

ຕອບ:

**12** *ກ.ຖືກ*

**13** *ຂ.ຖືກ*

**14** *ບໍ່*

**15** *ຄວາມຮັກ*

**16** *ເຂາຂອງອັນບໍ່ບໍລິບູນທີ່ຕົນມີນັ້ນ*

**17** *ພໍໃຈ*

**18** ວັດຖຸສິ່ງຂອງນັ້ນສາມາດໃຫ້ມີຄວາມຍຸດຕິທຳໃນດ້ານດຽວຄື: (ໃຫ້ເລືອກເອົາຂໍ້ທີ່ຖືກ)

______ ສັງຄົມ ______ ການເມືອງ ______ ເສຖະກິດ

ຄວາມບົກຜ່ອງ ທີ 2

**19** ໃຫ້ທ່ານອ່ານ ມທ 6:19-20 ອ້າງເຖິງການບົກຜ່ອງຂອງວັດຖຸສິ່ງຂອງອີກປະການໜຶ່ງ. (ຈົ່ງເລືອກເອົາຂໍ້ທີ່ຖືກ)

______ ວັດຖຸສິ່ງຂອງບໍ່ທົນທານ ______ ວັດຖຸສິ່ງຂອງທົນທານ

**20** ຈົ່ງຕື່ມຄວາມໃສ່ບ່ອນວ່າງຕໍ່ໄປນີ້:

ກ. ຄວາມບົກຜ່ອງທີໜຶ່ງ ຄືບໍ່ມີຄົນໃດຈະພໍ ______________________ ກັບວັດຖຸສິ່ງຂອງ.

ຂ. ຄວາມບົກຜ່ອງປະການທີສອງຄືວັກຖຸສິ່ງຂອງບໍ່ ______________________________

**21** ເມື່ອພະເຢຊູເທດສະໜາຢູ່ຈ້າຍພູ ພະອົງສອນວ່າວັດຖຸສິ່ງຂອງບໍ່ທົນທານ. ນັ້ນແຫຼະ ເປັນການບົກຜ່ອງປະການທີ 2 ໃນຜູ້ທີ່ເຊື່ອໃນວັດຖຸສິ່ງຂອງ ພະເຢຊູສອນຢ່າງນັ້ນໃນ ມັດທາຍ ບົດໃດ ຂໍ້ໃດ? ____________________________________________________________

**22** ການເຊື່ອໃນວັດຖຸສິ່ງຂອງມີສ່ວນບົກຜ່ອງ 2 ປະການໃດ? _________ ແລະ __________

ຄວາມບົກຜ່ອງ ທີ 3

**23** ຜູ້ເຊື່ອໃນວັດຖຸສິ່ງຂອງ ຄິດວ່າຈະເປັນຄົນດີ ຫຼືຄົນບໍ່ດີແລ້ວແຕ່ສິ່ງແວດລ້ອມ ຖືວ່າຜູ້ໃດຢູ່ໃນສະຖານທີ່ສະພາບແວດ ລ້ອມດີຄົນນັ້ນຈະກາຍເປັນຄົນດີເໝືອນກັນ. ທີ່ຈິງຄວາມບໍ່ຍຸດຕິທຳມີມາເພາະມະນຸດເປັນຄົນບາບ ສິ່ງແວດລ້ອມຈະປ່ຽນປານໃດກໍຕາມ ແຕ່ຖ້າຍັງເປັນຄົນບາບໃຈມະນຸດນັ້ນບໍ່ປ່ຽນດອກ. ຄວາມບໍ່ຍຸດຕິທຳເກີດມາຈາກຄວາມ ____________________ ໃນໃຈຂອງ ____________________________________________________________

**24** ບໍ່ແມ່ນວ່າເຮົາຍິ່ງມີຍິ່ງຂອບທຳ ໃຫ້ອ່ານ ພະບັນຍັດສອງ 8:13-14 ຜູ້ມີຫຼາຍຈົ່ງລະວັງຢ່າໄດ້

____________________________________________________________

ຕອບ:

**18** *ເສດຖະກິດ*

**19** *ວັດຖຸສິ່ງຂອງບໍ່ທົນທານ*

**20** *ກ. ພໍໃຈ ຂ. ທົນທານ*

**21** *ມທ 6:19*

**22** *ບໍ່ພໍໃຈ ແລະ ບໍ່ທົນທານ*

**23** *ບາບ...ມະນຸດ*

**24** *ຢ່າໄດ້ຈອງຫອງ (ພອງຕົວຈົນລືມພະເຈົາ)*

**25** ໃນ ພະບັນຍັດສອງ 8:2-3 ໂມເຊເຕືອນເຂົາ (ຊຶ່ງເປັນຄົນຍິວ) ຢ່າລືມວ່າ ບໍ່ແມ່ນແຕ່ອາຫານ ເທົ່ານັ້ນທີ່ໃຫ້ມະນຸດ ມີຊີວິດຢູ່ແລະມະນຸດຈໍາເປັນຕ້ອງລ້ຽງຊີວິດດ້ວຍຫຍັງ?

__________________________________________________________

**26** ກ. ແມ່ນຜູ້ໃດຕົກໃນບາບດ້ວຍລືມຂໍ້ຄວາມນັ້ນ? (ໃຫ້ເລືອກ)

_______ ພະເຢຊູໃນປ່າ _______ ຊາດຢິວໃນປ່າ

ຂ. ແມ່ນຜູ້ໃດທີ່ບໍ່ຕົກໃນບາບແຕ່ໄດ້ຈື່ຈໍາຄໍາສອນນັ້ນ? (ໃຫ້ເລືອກ)

_______ ພະເຢຊູໃນປ່າ _______ ຊາດຢິວໃນປ່າ

**27** ວັດຖຸສິ່ງຂອງອ້າງວ່າ ຈະມີຄວາມຍຸດຕິທໍາດ້ວຍທາງວັດຖຸສິ່ງຂອງນັ້ນ ແຕ່ບໍ່ເຫັນສໍາເລັດຈັກ ເທື່ອ ໃນບ່ອນໃດໆ ກໍດີຍັງ ຈະມີຄົນທີ່ເຫັນແກ່ຕົວແລະຄວາມວຸ້ນວາຍສະເຫມີ. ໃຫ້ອ່ານ ສຸພາ ສິດ 23:5 ພໍດີຈະໄດ້ເງິນມາເງິນນັ້ນຈະເປັນ ຢ່າງໃດ? __________________________

**28** ເຖິງວ່າຈະປ່ຽນສະພາບແວດລ້ອມກໍຕາມ ແຕ່ການນັ້ນຈະເຮັດໃຫ້ໃຈຂອງມະນຸດປ່ຽນບໍ່? __

<u>ຄວາມບົກຜ່ອງ ທີ 4</u>

**29** ພະເຈົ້າສ້າງມະນຸດໃຫ້ປະກອບດ້ວຍ 3 ສ່ວນຄື: ຮ່າງກາຍ ຈິດໃຈ ແລະຈິດວິນຍານ ຫຼັກວັດຖຸ ສິ່ງຂອງມີຈຸດປະສົງຈະ ແກ້ໄຂບັນຫາການບໍ່ຍຸດຕິທໍາດ້ວຍຈະປ່ຽນສະພາບແວດລ້ອມຝ່າຍ ຮ່າງກາຍຢ່າງດຽວ ແຕ່ການນັ້ນຍັງປ່ຽນຈິດໃຈບໍ່ໄດ້. ໃຫ້ອ່ານ I ເປໂຕ 1:18-19

ກ. ມີສອງສິ່ງໃດທີ່ເສື່ອມສູນໄປຈຶ່ງໄຖ່ເຮົາບໍ່ໄດ້? ______________ ແລະ ___________

ຂ. ແຕ່ໄຖ່ດ້ວຍຫຍັງ? ______________________________________________

**30** ວັດຖຸສິ່ງຂອງອາດຊ່ວຍໄດ້ທາງຮ່າງກາຍ ແຕ່ຝ່າຍຈິດໃຈຈະເປັນຢ່າງໃດ? (ໃຫ້ເລືອກ)

_______ ຊ່ອຍຈິດໃຈໄດ້ເຫມືອນກັນ _______ ຊ່ອຍດ້ານຈິດໃຈບໍ່ໄດ້

ຕອບ:

**25** *ດ້ວຍພະທໍາທຸກຂໍ້ທີ່ອອກມາຈາກພະໂອດຂອງພະເຈາ.*

**26** *ກ. ຊາດຢິວໃນປ່າ ຂ. ພະເຢຊູໃນປ່າ*

**27** *ຈະເສຍຫາຍໄປ*

**28** *ບໍ່*

**29** *ກ. ເງິນແລະຄໍາ ຂ. ພະໂລຫິດອັນມີຄ່າຂອງພະຄຣິດ*

**30** *ຊ່ອຍດ້ານຈິດໃຈບໍ່ໄດ້*

**31** ວັດຖຸສິ່ງຂອງອາດຈະຊ່ອຍດ້ານຮ່າງກາຍກໍໄດ້ ຊ່ອຍທາງດ້ານສິ່ງແວດລ້ອມກໍໄດ້ ຊ່ອຍໃຫ້ມີຄວາມຍຸດຕິທຳດ້ານເສດ ຖະກິດໄດ້. (ໃຫ້ທ່ານອ່ານປະໂຫຍກທີ່ມີຢູ່ຂ້າງຂວາວ່າ ຖືກກັບຂໍ້ພະຄຳພີຂໍ້ໃດທີ່ມີຢູ່ຂ້າງຊ້າຍແລ້ວເອົາມາຈັບຄູ່ກັນໃຫ້ຖືກ)

| | |
|---|---|
| ______ 1. I ເປໂຕ 1:18-19 | ກ. ບໍ່ໃຫ້ພໍໃຈ |
| ______ 2. ພບຍ ສອງ 32:15 | ຂ. ບໍ່ທົນທານ |
| ______ 3. ມທ 4:4 | ຄ. ບໍ່ສາມາດປ່ຽນຈິດໃຈມະນຸດ |
| ______ 4. ມທ 6:19 | ງ. ໄຖ່ບາບໃຫ້ລອດພົ້ນບໍ່ໄດ້ |

**32** ວັດຖຸສິ່ງຂອງມີການບົກຜ່ອງ 4 ປະການໃດ? (ຈົ່ງຕື່ມຄວາມທີ່ຂາດ)

ກ. ບໍ່ ______________________ ໃຈ

ຂ. ບໍ່ ______________________ ທານ

ຄ. ບໍ່ ______________________ ຈິດໃຈມະນຸດໄດ້

ງ. ໄຖ່ ______________________ ບໍ່ໄດ້

**33** ທ່ານຢ່າກັບໄປເບິ່ງຄຳຖາມກ່ອນ. ວັດຖຸສິ່ງຂອງມີການບົກຜ່ອງ 4 ປະການໃດ?

ກ. ____________________________________________

ຂ. ____________________________________________

ຄ. ____________________________________________

ງ. ____________________________________________

*ບົດນີ້ບໍ່ມີບົດເສັງເທື່ອ ຈະເອົາໄວ້ເສັງຮວມກັບ ບົດທີ 17 ຕໍ່ໄປໃນບົດນັ້ນຈະສຶກສາເລື່ອງຄຳສອນຂອງພະເຢຊູ ກ່ຽວກັບຄວາມຍຸດຕິທຳແລະລາຊະອານາຈັກສະຫວັນ.*

ຕອບ:

**31** *1. ຖືກກັບ ງ. 2. ຖືກກັບ ຄ. 3. ຖືກກັບ ກ. 4. ຖືກກັບ ຂ.*

**32** *ກ. ໃຫ້ພໍ ຂ. ທົນ ຄ. ສາມາດປ່ຽນ ງ. ບາບໃຫ້ລອດພົ້ນ*

**33** *ກ. ບໍ່ໃຫ້ພໍໃຈ ຂ. ບໍ່ທົນທານ ຄ. ບໍ່ສາມາດປ່ຽນຈິດໃຈມະນຸດໄດ້*
*ງ. ໄຖ່ບາບໃຫ້ເຮົາລອດພົ້ນບໍ່ໄດ້*